## ບັນດາຂໍ້ກຳນົດສຳລັບໃຫ້ນັກຝຶກອົບຮົມ

(ຈຸດປະສົງ)
**ມາດຕາ 1:**
ກົດລະບຽບນີ້ກຳນົດກ່ຽວກັບບັນດາເນື້ອໃນທີ່ນັກຝຶກອົບຮົມທີ່ມາຍີ່ປຸ່ນຕ້ອງປະຕິບັດຕາມໃນໄລຍະທີ່ຝຶກອົບຮົມຖ້າໄດ້ຮັບການຕອບຮັບແລະຝຶກອົບຮົມຈາກThe Association for Overseas Technical Cooperation and Sustainable Partnerships (ຫຼັງຈາກນີ້ຈະເອີ້ນວ່າ "AOTS".).
ໃນຖານະທີ່ເປັນໂຄງການຮູບແບບນຳໃຊ້ການຮ່ວມມືດ້ານເຕັກນິກ - ບຸກເບີກຕະຫຼາດປະເທດໃໝ່ (ວຽກງານການຝຶກອົບຮົມ - ຈັດສົ່ງນັກຊ່ຽວຊານ) ຫຼືວ່າ    ໂຄງການພັດທະນາຊັບພະຍາກອນມະນຸດສຳລັບການສົ່ງອອກເຕັກນິກອາຍກາກບອນຕ່ຳ (ໂຄງການສະໜັບສະໜູນການສົ່ງເສີມການສົ່ງອອກເຕັກນິກອາຍກາກບອກຕ່ຳ ແລະ ພັດທະນາຊັບພະຍາກອນມະນຸດ)

(ປະຕິບັດຕາມກົດໝາຍ, ອື່ນໆ...)
**ມາດຕາ 2:**
1 ນັກຝຶກອົບຮົມຕ້ອງເຄົາລົບປະຕິບັດຕາມກົດໝາຍຂອງລັດຖະບານຍີ່ປຸ່ນກໍ່ຄືບັນດາຂໍ້ກຳນົດທີ່ AOTS ແລະວິສາຫະກິດຮັບຕ້ອນນັກຝຶກອົບຮົມໄດ້ວາງອອກ.
2 ອີງຕາມມາດຕາຂ້າງເທິງ, ນັກຝຶກອົບຮົມບໍ່ອະນຸຍາດໃຫ້ເຮັດວຽກຫຼືວຽກເວລາຫວ່າງ.

(ການຕິດຕໍ່ກ່ອນມາຍີ່ປຸ່ນ)
**ມາດຕາ 3:** ນັກຝຶກອົບຮົມທີ່ສະໝັກຈາກບໍລິສັດຕ່າງປະເທດຕ່າງໆແມ່ນ, ກ່ອນມື້ທີ່ຈະເລີ່ມຝຶກອົບຮົມ ກ່ອນຮອດ 2 ອາທິດ ແມ່ນຕ້ອງໄດ້ຍື່ນ ໜັງສືຕົກລົງເງື່ອນໄຂການເຊີນ, ກອບປີ້ປີ້ຍົນ ແລະ ກອບປີ້ໃບຮັບເງິນຄ່າປີ້ຍົນໃຫ້ທາງສະມາຄົມ, ແລະ ຕ້ອງໄດ້ຕິດຕໍ່ຫາສະມາຄົມກ່ຽວກັບເລື່ອງການຕົກລົງຍອມຮັກສາກົດໝາຍຂອງປະເທດຍີ່ປຸ່ນ ພ້ອມແຕ່ລະກົດລະບຽບ ແລະ ແຜນຕາຕະລາງການມາປະເທດຍີ່ປຸ່ນ ແລະ ກັບຄືນປະເທດ.

(ມາປະເທດຍີ່ປຸ່ນ)
**ມາດຕາ 4:** ນັກຝຶກອົບຮົມແມ່ນຕ້ອງໄດ້ມາປະເທດຍີ່ປຸ່ນກ່ອນມື້ທີ່ຈະເລີ່ມການຝຶກອົບຮົມມື້ໜຶ່ງ.
ແຕ່ວ່າ,ໃນກໍລະນີທີ່ມີສະພາບຄວາມຈຳເປັນ ແລະ ທາງສະມາຄົມກໍ່ອະນຸຍາດ ແມ່ນຈະສາມາດມາຍີ່ປຸ່ນລ່ວງໜ້າເທິງໆກ່ອນມື້ທີ່ຈະເລີ່ມຝຶກອົບຮົມໄດ້.

(ແຜນການອົບຮົມ)
**ມາດຕາ 5:**
1 ນັກຝຶກອົບຮົມຕ້ອງຂະຫຍັນຝຶກງານຕາມແຜນ ການການອົບຮົມໂດຍ AOTS ຂີດຂຽນ(ຮຽບຮຽງປະພັນ), ຫຼືແຜນການການອົບຮົມໂດຍວິສາຫະກິດຮັບຕ້ອນຮຽບຮຽງປະພັນ ແລະ  ໄດ້ຮັບການອະນຸມັດຈາກ AOTS.
2 ນັກຝຶກອົບຮົມຕ້ອງໄດ້ເຂົ້າຮ່ວມກິດຈະກຳຕະຫຼອດໄລຍະການຝຶກອົບຮົມ, ນອກຈາກກໍລະນີຈຳເປັນຕ້ອງຢຸດຍ້ອນບັນຫາທາງດ້ານສຸຂະພາບ.

(ຄ່າຕອບແທນ)
**ມາດຕາ 6:**
ນັກຝຶກອົບຮົມຈະໄດ້ຮັບການເກື້ອກຸນ ແລະ ການບໍລິການຕາມມາດຕະຖານທີ່‡AOTS ໄດ້ວາງອອກ.

(ຄວາມປາຖະໜາຫຼືການຮ້ອງຮຽນຂອງນັກຝຶກອົບຮົມ)
**ມາດຕາ 7:**
ນັກຝຶກອົບຮົມສາມາດສະເໜີຄວາມປາດຖະໜາທີ່ປ່ຽນແປງຫຼືມາດຕາທີ່ພຶງພໍໃຈກ່ຽວກັບການຝຶກອົບຮົມຫຼືການປິ່ນປົວ,ອື່ນໆ...ຫຼັງຈາກນັ້ນ, AOTS ຈະຕິດຕໍ່ກັບພາກສ່ວນທີ່ກ່ຽວຂ້ອງເພື່ອຊອກຫາວິທີແລະແນວທາງທີ່ດີທີ່ສຸດໃນການສະເໜີນັ້ນໂດຍໄວ. ແຕ່ວ່າ, ນັກຝຶກອົບຮົມຕ້ອງປະຕິບັດຕາມຂໍ້ຕົກລົງສຸດທ້າຍຂອງ AOTS.

(ໃສ່ໃຈຕໍ່ຄວາມປອດໄພ)
**ມາດຕາ 8:**
1
ນັກຝຶກອົບຮົມຕ້ອງໄດ້ໃສ່ໃຈໃນສຸຂະພາບແລະຄວາມປອດໄພໃນການໃຊ້ຊີວິດປະຈຳວັນຂອງຕົນເອງເພື່ອບໍ່ໃຫ້ມີຜົນສະທ້ອນຕໍ່ການຝຶກອົບຮົມ.
2    ອີງຕາມມາດຕາຂ້າງເທິງ,ນັກຝຶກອົບຮົມບໍ່ໄດ້ຮັບອະນຸຍາດໃຫ້ໃຊ້ລົດຈັກ(ລວມທັງລົດໃຫ່ຍ, ລົດຈັກ)ແລະລົດຖີບ,ເຖິງວ່າ,ຖ້າໄລຍະທາງລະຫວ່າງຫໍພັກແລະບ່ອນຝຶກອົບຮົມໃນໄລຍະຝຶກອົບຮົມພາກສະໜາມບໍ່ແມ່ນລະບົບຄົມມະນາຄົມທາງບົກ,ແລະກໍ່ໃຫ້ເກີດຄວາມຫຍຸ້ງຍາກໃນການໄປມາດ້ວຍພາຫະນະອື່ນ,ແມ່ນນັກຝຶກອົບຮົມສາມາດນຳໃຊ້ລົດຖີບໃນເງື່ອນໄຂໄດ້ຮັບການສຶກສາກ່ຽວກັບຄວາມປອດໄພແລະປະຕິບັດບັນດາເອກະສານກ່ຽວກັບປະກັນໄພ,ອື່ນໆ...ໂດຍຜ່ານວິສາຫະກິດທີ່ຕ້ອນຮັບ.

(ຫໍພັກ)
**ມາດຕາ 9:**
1 ນັກຝຶກອົບຮົມຕ້ອງໄດ້ຢູ່ໃນຫໍພັກທີ່ AOTS ຫຼືວິສາຫະກິດຕ້ອນຮັບໄດ້ບົ່ງໄວ້ຫຼືຍອມຮັບ.
2 ນັກຝຶກອົບຮົມຕ້ອງໄດ້ຮັບອະນຸຍາດຈາກ AOTS
ກ່ອນຖ້າມີຄວາມປາດຖະໜາທີ່ຈະຢູ່ເຮືອນເຊົ່າຢູ່ບ່ອນທີ່ບໍ່ແມ່ນຫໍພັກ,ຄ້າຍຄືກັນນັ້ນ, ຖ້າວ່າກຳລັງຢູ່ໃນການຝຶກອົບຮົມພາກສະໜາມ,
ແມ່ນຈຳເປັນຕ້ອງໄດ້ລາຍງານໃຫ້ແກ່ AOTS ໂດຍຜ່ານວິສາຫະກິດທີ່ຕ້ອນຮັບ.

(ເວລາປິດປະຕູຂອງສູນຝຶກອົບຮົມ)
**ມາດຕາ 10:** ເວລາປິດປະຕູຂອງສູນຝຶກອົບຮົມແມ່ນ 11ໂມງກາງຄືນ, ນັກຝຶກອົບຮົມທີ່ພັກຢູ່ໃນສູນຝຶກອົບຮົມ
ໃນເວລາທີ່ອອກໄປຂ້າງນອກ ແມ່ນຕ້ອງໄດ້ກັບຄືນສູນຝຶກອົບຮົມກ່ອນໂມງປິດປະຕູ.
ໃນກໍລະນີທີ່ບໍ່ສາມາດກັບຄືນສູນຝຶກອົບຮົມໄດ້ທັນໂມງປິດປະຕູ ແມ່ນຕ້ອງໄດ້ຕິດຕໍ່ຫາສູນຝຶກອົບຮົມລ່ວງໜ້າກ່ອນ.

(ຄອບຄົວມານຳ)
**ມາດຕາ 11:**
ໃນເວລາອົບຮົມຢູ່, ນັກຝຶກອົບຮົມບໍ່ໄດ້ຮັບອະນຸຍາດໄປກັບຄອບຄົວຫຼືເອີ້ນຄອບຄົວມາຢູ່ນຳ. ແຕ່ວ່າ,
ຖ້າມີເຫດຜົນບໍ່ເຕັມໃຈໃນເວລາອົບຮົມຕົວຈິງ, ກ່ອນອື່ນນັກຝຶກອົບຮົມຕ້ອງໄດ້ຮັບອະນຸມັດຈາກ AOTS
ໂດຍຜ່ານວິສາຫະກິດທີ່ຕ້ອນຮັບ.

(ອອກນອກຊົ່ວຄາວ)
**ມາດຕາ 12:**
ນັກຝຶກອົບຮົມບໍ່ໄດ້ຮັບອະນຸຍາດອອກຈາກຍີ່ປຸ່ນ.ເຖິງວ່າ,ຖ້າວ່າຈຳເປັນຕ້ອງໄດ້ອອກຈາກຍີ່ປຸ່ນໃນໄລຍະເວລາໃດໜຶ່ງຍ້ອນເຫດຜົນສຸດ
ວິໄສ,ແມ່ນນັກຝຶກອົບຮົມຕ້ອງໄດ້ໃຫ້ AOTS ອະນຸຍາດກ່ອນ.ຄ້າຍຄືກັນນັ້ນ,ຖ້າວ່າກຳລັງຢູ່ໃນການຝຶກອົບຮົມພາກສະໜາມ,
ແມ່ນຈຳເປັນຕ້ອງໄດ້ລາຍງານໃຫ້ແກ່ AOTS ໂດຍຜ່ານວິສາຫະກິດທີ່ຕ້ອນຮັບ.

(ປະກັນໄພ)
**ມາດຕາ 13:**
1 ນັກຝຶກອົບຮົມຈະໄດ້ຮັບການເບິ່ງແຍງສາທາລະນະສຸກ,ອື່ນໆ...ອີງຕາມສັນຍາປະກັນໄພການເດີນທາງແຫ່ງຊາດທີ່ AOTS
ໄດ້ຕ່າງໜ້ານັກຝຶກອົບຮົມເຊັນກັບບໍລິສັດປະກັນໄພໃນບົດບາດຜູ້ຮັບຜົນເພື່ອປ້ອງກັນອຸບັດຕິເຫດຫຼືເຫດການຄາດບໍ່ເຖິງໃຫ້ແກ່ນັກ
ຝຶກອົບຮົມ(ລວມທັງນັກຝຶກອົບຮົມຜິດຫຼືບໍ່ຜິດ)ເຫດການທີ່ເກີດຂື້ນໂດຍບັງເອີນຫຼືບໍ່ຕັ້ງໃຈ.ຄ່າປະກັນໄພແມ່ນ AOTS ເປັນຜູ້ຈ່າຍ.
2 ນັກຝຶກອົບຮົມຕ້ອງໄດ້ລາຍງານກ່ອນແລະຊອກຫາຄຳແນະນຳຈາກ AOTS ໃນເວລາທີ່
ຮູ້ວ່າຈະຕ້ອງໄດ້ໃຊ້ຈຳນວນເງິນທີ່ເກີນກຳນົດໃນສັນຍາປະກັນໄພນັ້ນ.ຖ້າວ່າກຳລັງຢູ່ໃນການຝຶກອົບຮົມພາກສະໜາມ,
ແມ່ນຈຳເປັນຕ້ອງໄດ້ລາຍງານໃຫ້ແກ່ AOTS ໂດຍຜ່ານວິສາຫະກິດທີ່ຕ້ອນຮັບ.
3 ເມື່ອນັກຝຶກອົບຮົມເຂົ້າໂຮງໝໍຍ້ອນບໍ່ສະບາຍຫຼືບາດເຈັບ, ອັນເຮັດໃຫ້ເກີດອຸປະສັກຕໍ່ການຝຶກອົບຮົມອື່ນໆ,
ຕ້ອງແຈ້ງໃຫ້ວິສາຫະກິດຮັບຕ້ອນຫຼື AOTS ກ່ອນ.
4 ສຳລັບຄວາມເສຍຫາຍຂອງນັກຝຶກອົບຮົມທີ່ເກີດຈາກອຸບັດຕິເຫດຕ່າງໆທີ່ໄດ້ລະບຸໄວ້ຢູ່ໃນວັກທີ
1 ,ນອກເໜືອຈາກເງິນປະກັນທີ່ທາງບໍລິສັດປະກັນໄພຈ່າຍໃຫ້ແລ້ວ, ທາງ AOTS ແມ່ນ ຈະບໍ່ຮັບຜິດຊອບຊົດເຊີຍຄ່າເສຍຫາຍ.

(ຜົນເສຍຫາຍໃນຄວາມຮັບຜິດຊອບຂອງນັກຝຶກອົບຮົມ)
**ມາດຕາ 14:**
ເວລາທີ່ນັກຝຶກອົບຮົມສ້າງຜົນເສຍຫາຍໃຫ້ແກ່ AOTS
ຫຼືວິສາຫະກິດຕ້ອນຮັບຍ້ອນຕັ້ງໃຈຫຼືບໍ່ຕັ້ງໃຈຮ້າຍແຮງແມ່ນອາດຈະໄດ້ມີການຮຽກຮ້ອງໃຫ້ຊົດເຊີຍຄ່າເສຍຫາຍໃຫ້ແກ່ AOTS
ຫຼືວິສາຫະກິດຕ້ອນຮັບ.

(ອອກຈາກການເປັນນັກຝຶກອົບຮົມ)
**ມາດຕາ 15**:
1 ມີບາງກໍລະນີຈະມີການອອກຈາກການເປັນນັກຝຶກອົບຮົມຖ້າວ່ານັກຝຶກອົບຮົມຕົກຢູ່ໃນໜຶ່ງໃນກໍລະນີດັ່ງລຸ່ມນີ້
  1) ເວລາທີ່ເຮັດຜິດຂໍ້ກຳນົດໃນກົດລະບຽບນີ້
  2) ເມື່ອຄວາມສາມາດ ແລະ ຄວາມຮູ້ໃນການຮ່ຳຮຽນບໍ່ພຽງພໍຫຼືມີພຶດຕິກຳ ແລະ ອຸດົມຄະຕິໃນການເຂົ້າຮ່ວມການຝຶກອົບຮົມບໍ່ດີ,
ເຖິງວ່າຈະສືບຕໍ່ການຝຶກອົບຮົມກໍ່ຍັງບໍ່ສາມາດຄາດວ່າຈະປະສົບຜົນສຳເລັດໄດ້ຄືກັບຫວັງໄວ້.
  3) ເມື່ອຍາກຕໍ່ການສືບຕໍ່ການຝຶກອົບຮົມຍ້ອນບໍ່ສະບາຍຫຼືບາດເຈັບ.
  4) ເມື່ອມີພຶດຕິກຳກໍ່ຄວາມເສຍຫາຍຮ້າຍແຮງຮອດກຽດຕິຍົດ ແລະ ຊື່ສຽງຂອງ AOTS.
  5) ເມື່ອມີເຫດຜົນທີ່ຄ້າຍຄືກັບບັນດາເນື້ອໃນກ່ອນໜ້ານີ້.
2 ນັກຝຶກອົບຮົມຈະອອກຈາກການເປັນນັກຝຶກອົບຮົມໂດຍອັດຕະໂນມັດຖ້າວ່າຕົກລົງຕ້ອນຮັບລະຫວ່າງ AOTS ແລະ
ວິສາຫະກິດທີ່ຕ້ອນຮັບຖືກລົບລ້າງ.
3 ຖ້າວ່າອອກຈາກການເປັນນັກຝຶກອົບຮົມໂດຍເຫດຜົນຢູ່ມາດຕາ1ແລະມາດຕາ2 ຢູ່ຂ້າງເທິງ,

ແມ່ນນັກຝຶກອົບຮົມຕ້ອງໄດ້ຈ່າຍຄ່າໃຊ້ຈ່າຍຈຳນວນໜຶ່ງຫຼືທັງໝົດທີ່ກ່ຽວຂ້ອງໃນໄລຍະການຝຶກອົບຮົມແລະອາໄສຢູ່ຈົນເຖິງປະຈຸບັນໃຫ້ແກ່ AOTS ໂດຍກົງຫຼືຜ່ານ   ວິສາຫະກິດທີ່ຕ້ອນຮັບ.

(ກັບປະເທດ)
**ມາດຕາ 16:**
1 ເວລາທີ່ສຳເລັດການຝຶກອົບຮົມຫຼື ເວລາທີ່ອອກຈາກການເປັນນັກຝຶກອົບຮົມ,ແມ່ນນັກຝຶກອົບຮົມຕ້ອງໄດ້ກັບປະເທດໂດຍໄວ.
ແຕ່ວ່າ, ບໍ່ໃຫ້ກາຍເວລາສຳລັບກໍລະນີທີ່ AOTS ໄດ້ຍອມຮັບໃຫ້ຢູ່ຄືນ.
2 ຍົກເວັ້ນເນື້ອໃນທີ່ໄດ້ບັນທຶກໄວ້ໃນວັກ 1, ໃນກໍລະນີນັກຝຶກອົບຮົມຢູ່ຄືນກາຍ 8 ມື້ຫຼັງຈາກສຳເລັດການຝຶກອົບຮົມ, AOTS ຈະບໍ່ຈ່າຍຄ່າໄປມາໃຫ້.
3 ຂໍ້ກຳນົດຢູ່ວັກ 3 ມາດຕາ 12 ໄດ້ນຳໃຊ້ຄືກັບກໍລະນີທີ່ຄ້າຍຄືກັນຢູ່ວັກ

(ໃບຢັ້ງຢືນຈົບການຝຶກອົບຮົມ)
**ມາດຕາ 17:**
ເວລາທີ່ສຳເລັດການຝຶກອົບຮົມຕາມທີ່ໄດ້ກຳນົດໄວ້,ອີງຕາມ “ຂໍ້ກຳນົດການໃຫ້ໃບຮັບຮອງສຳເລັດ ການຝຶກອົບຮົມ”,
ແມ່ນນັກຝຶກອົບຮົມຈະໄດ້ຮັບໃບຮັບຮອງສຳເລັດ ການຝຶກອົບຮົມຈາກ AOTS.

(ມາດຕາອື່ນ)
**ມາດຕາ 18:**
ບັນດາບັນຫາທີ່ບໍ່ໄດ້ກຳນົດຫຼືບັນດາບັນຫາທີ່ຕ້ອງການເພີ່ມເຕີມດັດແປງໃນກົດລະບຽບນີ້ຈະໄດ້ຖືກ **AOTS** ກຳນົດເພີ່ມເຕີມໃນທຸກເວລາ**.**

ຂໍ້ກຳນົດເພີ່ມເຕີມ
ກົດລະບຽບນີ້ນຳໃຊ້ນັບແຕ່ວັນທີ 1 ເດືອນ 04 ປີ 2019.